ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ

ເລກທີ: 6536 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ: 17/5/2010

ຮຽນ: ທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະເລຂາທິການລັດຖະບານ ທີ່ນັບຖື.

ເລື່ອງ: ສະຫລຸບສັງລວມສະພາບການຈັດຕັ້ງປະຕິບັດວຽກຈຸດສຸມໃນເດືອນ 5/2010 ແລະສະເໜີແຜນວຽກປະຈຳເດືອນ 6/2010 ຂອງກະຊວງ ຍທຂ.

ກະຊວງໂຍທາທິການ ແລະຂົນສົ່ງ ຂໍຖືເປັນກຽດລາຍງານມາຍັງທ່ານ ກ່ຽວກັບການສະຫລຸບສັງລວມສະພາບພົ້ນເດັ່ນໃນການເຄື່ອນໄຫວປະຕິບັດວຽກງານ ແລະແກ້ໄຂບັນຫາສຳຄັນໃນເດືອນ 5/2010 ແລະ ສະເໜີແຜນວຽກປະຈຳເດືອນ 6/2010 ຂອງກະຊວງ ຍທຂ, ລາຍລະອຽດດັ່ງນີ້:

I. <u>ສະພາບການຈັດຕັ້ງປະຕິບັດວຽກງານຂອງຂະແໜງ ຍທຂ ໃນເດືອນ 5/2010.</u>

ກ. <u>ສະພາບລວມ.</u>

ໃນໄລຍະໜຶ່ງເດືອນທີ່ຜ່ານມາ, ຂະແໜງ ຍທຂ ໄດ້ຈັດຕັ້ງປະຕິບັດແຜນການສົກປີ 2009-2010 ຢ່າງຕັ້ງໜ້າ, ຊຶ່ງສະແດງອອກໃຫ້ເຫັນບາງດ້ານທີ່ພົ້ນເດັ່ນ ແລະບາງຂໍ້ຄົງຄ້າງທີ່ຕ້ອງໄດ້ສືບຕໍ່ແກ້ໄຂໃນເດືອນຕໍ່ໄປດັ່ງນີ້:

ຂ. <u>ສະພາບພົ້ນເດັ່ນ.</u>

- ໄດ້ເຊັນສັນຍາຮ່ວມທຸລະກິດວ່າດ້ວຍການສ້າງຕັ້ງບໍລິສັດທ່າເຮືອຫວຸງອາງລາວ-ຫວຽດນາມ ລະຫວ່າງບໍລິສັດລາວພັດທະນາທ່າເຮືອຫວຸງອາງຈຳກັດ ແລະສະຫະບໍລິສັດແຮ່ທາດ ແລະການຄ້າຮ່າຕິງ, ໃນວັນທີ 16/4/2010.
- ເຂົ້າຮ່ວມກອງປະຊຸມລະຫວ່າງລັດຖະບານ ແລະເຈົ້າແຂວງທົ່ວປະເທດ ລະຫວ່າງວັນທີ 21-24/4/2010.
- ຈັດຕັ້ງປາຖະກະຖາວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບຄົບຮອບ 49 ປີ ໃນວັນທີ 27/4/2010, ມີຜູ້ເຂົ້າຮ່ວມທັງໝົດຈຳນວນ 122 ຄົນ (ຍິງ 34), ໃຫ້ກຽດບັນລະຍາຍຂອງທ່ານ ທອງບັນ ແສງອາພອນ, ເລຂາທິການສູນກາງພັກ, ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ.
- ສຳເລັດການກະກຽມງານວາງສະແດງໂລກຢູ່ຊຽງໄຮພາຍໃຕ້ຫົວຂໍ້ "ຕົວເມືອງທີ່ດີ, ຊີວິດທີ່ດີ".
- ເຂົ້າຮ່ວມກອງປະຊຸມກ່ຽວກັບການຮ່ວມມືສຳລັບການປົກຄອງທີ່ດີ ແລະການສ້າງຄວາມສາມາດດ້ານການຄຸ້ມຄອງລະບົບນ້ຳໃນຕົວເມືອງທີ່ ສ.ເກົາຫລີ, ລະຫວ່າງວັນທີ 2-8/5/2010.
- ຮ່ວມກັບຄະນະພົວພັນຕ່າງປະເທດສູນກາງພັກ ຈັດງານໂຮມຊຸມນຸມຊົມເຊີຍວັນໄຊຊະນະມະຫາສົງຄາມປົກປ້ອງປິຕຸພູມຄົບຮອບ 65 ປີ, ໃນວັນທີ 10/5/2010 ທີ່ມະຫາວິທະຍາໄລແຫ່ງຊາດ.
- ອວຍພອນທ່ານ ເອກອັກຄະລັດຖະທູດແຫ່ງສະຫະພັນຣັດເຊຍ ປະຈຳ ສປປ ລາວ, ເນື່ອງໃນໂອກາດວັນໄຊຊະນະມະຫາສົງຄາມປົກປ້ອງປິຕຸພູມຄົບຮອບ 65 ປີ (9/05/1945-9/05/2010), ໃນວັນທີ 7/5/2010.
- ຕ້ອນຮັບ ແລະເຮັດວຽກກັບຄະນະວິຊາການຈາກກະຊວງທາງລົດໄຟຂອງ ສປ ຈີນ, ທີ່ມາສຳຫລວດແລວທາງລົດໄຟແຕ່ນະຄອນຫລວງວຽງຈັນ-ບໍ່ເຕັນ/ບໍ່ຫານ ຊາຍແດນລາວ-ຈີນ, ພ້ອມທັງນຳພາຄະນະດັ່ງກ່າວລົງສຳຫລວດພາກສະໜາມ, ລະຫວ່າງວັນທີ 4-18/5/2010.

- ຕ້ອນຮັບ ແລະເຮັດວຽກກັບຄະນະວິຊາການຈາກກະຊວງທາງລົດໄຟຂອງ ສປ ຈີນ, ທີ່ມາສຳຫລວດແລວທາງລົດໄຟແຕ່ນະຄອນຫລວງວຽງຈັນ-ບໍ່ເຕັນ/ບໍ່ຫານ ຊາຍແດນລາວ-ຈີນ, ພ້ອມທັງນຳພາຄະນະດັ່ງກ່າວລົງສຳຫລວດພາກສະໜາມ, ລະຫວ່າງວັນທີ 4-18/5/2010.
- ຕິດຕາມທ່ານຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ໄປຢ້ຽມຢາມ ແລະເຄື່ອນໄຫວວຽກງານຢູ່ແຂວງອັດຕະປື, ລະຫວ່າງວັນທີ 10-13/5/2010.
- ສຳເລັດພິທີເຊັນລົງນາມສັນຍາກໍ່ສ້າງຂົວຂ້າມນ້ຳຂອງແຫ່ງທີ 4 (ຫ້ວຍຊາຍ-ຊຽງຂອງ) ລະຫວ່າງກະຊວງ ຍທຂ ແລະກະຊວງຄົມມະນາຄົມແຫ່ງຣາຊະອານາຈັກໄທ ໃນວັນທີ 13/5/2010, ທີ່ວັດຫວັດຊຽງຣາຍ, ປະເທດໄທ.
- ສຳເລັດພິທີມອບ-ຮັບ ແລະເປີດການນຳໃຊ້ຂົວນ້ຳທາ ເມືອງນາແລ ແຂວງຫລວງນ້ຳທາ, ໃນວັນທີ 12/5/2010. ພ້ອມກັນນັ້ນ, ໄດ້ໄປຕິດຕາມຊຸກຍູ້ ແລະເຄື່ອນໄຫວວຽກງານຢູ່ແຂວງຫລວງນ້ຳທາ ແລະແຂວງບໍ່ແກ້ວ ລະຫວ່າງວັນທີ 12-14/5/2010.
- ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ADB ເພື່ອຮັບເອົາການຊ່ວຍເຫລືອລ້າທາງດ້ານເຕັກນິກ (TA) ສຳລັບໂຄງການ ADB13, ເສັ້ນທາງ 1G (ເມືອງພິນ-ສາລະວັນ), ເສັ້ນທາງເລກ 6313 (ແຍກ 13ໃຕ້-ບ້ານແກ້ງແກບ, ມ.ທ່າປາງທອງ) ແລະເສັ້ນທາງ 15A (ນາປົ່ງ-ສາລະວັນ).
- ໄດ້ເຈລະຈາກັບ ADB ເພື່ອເອົາເງິນຊ່ວຍເຫລືອລ້າເພີ່ມເຕີມສຳລັບໂຄງການ ADB11 (ໄຊຍະບູລີ-ແກ່ນທ້າວ-ນາຂ່າ), ຈຳນວນ 27.000.000 ໂດລາສະຫະລັດ.
- ໄດ້ເຈລະຈາກັບອົງການ NEDA ຂອງໄທ ໃນການຊ່ວຍເຫລືອລ້າທາງດ້ານເຕັກນິກ (TA) ສຳລັບໂຄງການທາງແຕ່ພູດູ່-ປາກລາຍ, ລວງຍາວ 30 ກມ.

ຄ. <u>ດ້ານວຽກງານວິຊາສະເພາະ.</u>

- **ຂົງເຂດຂົວທາງ:**
  - ໄດ້ເຊັນສັນຍາກັບບໍລິສັດທີ່ປຶກສາ GITEC ໃນການຄຸ້ມຄອງການກໍ່ສ້າງຢູ່ແຂວງອັດຕະປື ແລະໄຊຍະບູລີ, ໂດຍໄດ້ຮັບການຊ່ວຍເຫລືອລ້າຈາກອົງການ KfW ປະເທດເຢຍລະມັນ.
  - ໄດ້ສົມທົບກັບອົງການ JICA ໃນການລົງເກັບກຳຂໍ້ມູນເພື່ອກະກຽມໃຫ້ແກ່ໂຄງການປັບປຸງເສັ້ນທາງໃນ 5 ແຂວງພາກໃຕ້.
  - ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການກໍ່ສ້າງຂົວທາງຕ່າງໆ:

| ລ/ດ | ລາຍລະອຽດໂຄງການ | ປະຕິບັດໄດ້ 4/2010 | ປະຕິບັດໄດ້ 5/2010 | ໝາຍເຫດ |
|---|---|---|---|---|
| 1 | ໂຄງການ ADB10 (ທັງ 4 ສັນຍາ) | 89,85% | **95,35%** | |
| 2 | ໂຄງການ ADB11 (ທັງ 4 ສັນຍາ) | 27,50% | **27,50%** | (ບໍ່ຄືບໜ້າ) |
| 3 | ໂຄງການກໍ່ສ້າງທາງ 450 ປີ (ດົງໂດກ-ດົງໂພສີ) | 65,81% | **65,81%** | (ບໍ່ຄືບໜ້າ) |
| 5 | ໂຄງການກໍ່ສ້າງທາງເມືອງເງິນ-ປາກແບ່ງ | 90,80% | **90,80%** | (ບໍ່ຄືບໜ້າ) |
| 6 | ໂຄງການກໍ່ສ້າງຂົວມິດຕະພາບແຫ່ງທີ 3 ຄຳມ່ວນ- ນະຄອນພະນົມ | 31,42% | **39,85%** | |
| 7 | ໂຄງການກໍ່ສ້າງທາງ 13 ເໜືອ (ນາເຕີຍ-ອຸດົມໄຊ) | 32,00% | **45,00%** | |
| 8 | ໂຄງການກໍ່ສ້າງທາງເບຕົງນ້ຳເກິ່ງ-ປາກນອມ | 7,78% | **27,00%** | |

| | | | | |
|---|---|---|---|---|
| 9 | ໂຄງການກໍ່ສ້າງທາງ 2E (ເມືອງຂວາ-ໄຕຈາງ) | 18,98% | **18,98%** | (ບໍ່ຄືບໜ້າ) |
| 10 | ໂຄງການທາງເມືອງເງິນ-ປາກຄອນ ແລະຂົວຂ້າມນ້ຳຂອງ | 3,38% | **3,53%** | |

*(**ໝາຍເຫດ**: ການປະເມີນເປີເຊັນຄວາມຄືບໜ້າຂອງໂຄງການ ແມ່ນຕິດພັນກັບເປີເຊັນການຊຳລະສະສາງ. ສະນັ້ນ, ໃນບາງຊ່ວງການຊຳລະສະສາງບໍ່ໄດ້ປະຕິບັດ ຈຶ່ງບໍ່ມີການປ່ຽນແປງຂອງເປີເຊັນຄວາມຄືບໜ້າ, ແຕ່ການດຳເນີນໂຄງການກໍ່ສ້າງແມ່ນ**ດຳເນີນໄປຢ່າງຕໍ່ເນື່ອງ ແລະເປັນປົກກະຕິ**).*

- **ຂົງເຂດຂົນສົ່ງທາງບົກ:**
  - ສຳເລັດການຈັດກອງປະຊຸມປຶກສາຫາລືວຽກງານຂົນສົ່ງໂດຍສານທາງບົກລະຫວ່າງ ສປປ ລາວ ແລະ ສປ ຈີນ, ໃນວັນທີ 5/7/2010.

- **ຂົງເຂດການບິນພົນລະເຮືອນ:**
  - ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການປັບປຸງສະໜາມບິນຕ່າງໆ:

| ລ/ດ | ລາຍລະອຽດໂຄງການ | ປະຕິບັດໄດ້ 4/2010 | ປະຕິບັດໄດ້ 5/2010 | ໝາຍເຫດ |
|---|---|---|---|---|
| 1 | **ໂຄງການປັບປຸງສະໜາມບິນຫລວງພະບາງ:** | | | |
| | - ສຳເລັດໂດຍພື້ນຖານສຳລັບວຽກງານຍົກຍ້າຍ, ວຽກເວນຄືນທີ່ດິນ ແລະວຽກສຳຫລວດອອກແບບ | 80% | **100%** | |
| | - ສຳລັບການກໍ່ສ້າງຕົວຈິງພວມລົງມືຈັດຕັ້ງປະຕິບັດ. | - | - | |
| 2 | **ໂຄງການປັບປຸງສະໜາມບິນປາກເຊ:** | | | |
| | - ສຳເລັດວຽກປູທັບທາງ Run way ເດີມ, ແລະຈະເປີດການນຳໃຊ້ສະໜາມບິນຄືນໃໝ່ໃນວັນທີ 21/5/2010 ນີ້. | - | **86,00%** | |

- **ກອງຄຸ້ມຄອງການຈະລາຈອນທາງອາກາດ:**
  - ສຳເລັດການຝຶກອົບຮົມການກວດກາລະບົບເຕັກນິກ ໃຫ້ພະນັກງານວິຊາການຢູ່ນະຄອນຫລວງວຽງຈັນ ແລະບັນດາແຂວງ.
  - ໄດ້ຕ້ອນຮັບ ແລະເຮັດວຽກຮ່ວມກັບຄະນະຄຸ້ມຄອງການຈະລາຈອນທາງອາກາດຂອງ ສສ ຫວຽດນາມ.
  - ສະຫລຸບສະຖິຕິການບິນຜ່ານ ແລະໜີ້ຕ້ອງຮັບ (ສຳລັບເດືອນ **4.2010**) ມີດັ່ງນີ້:

| ລ/ດ | ລາຍລະອຽດ | ຈຳນວນຖ້ຽວບິນ | ຈຳນວນໜີ້ຕ້ອງຮັບ (USD) |
|---|---|---|---|
| 1 | ບັນຊາບິນຜ່ານເສັ້ນບິນພາກເໜືອ | 2.249 | |
| 2 | ບັນຊາບິນຜ່ານເສັ້ນບິນພາກໃຕ້ | 6.262 | |
| **ລວມທັງໝົດ:** | | **8.511** | **2.326.600** |

*(ລາຍຮັບດັ່ງກ່າວມີຈຳນວນຫລຸດລົງ ຖ້າທຽບໃສ່ເດືອນຜ່ານມາທີ່ມີຈຳນວນ 2.217.420 USD).*

- **ກອງຄຸ້ມຄອງສະໜາມບິນ:**
  - ສະຫລຸບການເກັບລາຍຮັບຈາກການບໍລິການສະໜາມບິນ ສຳລັບເດືອນ 4/2010:

| ລ/ດ | ລາຍລະອຽດ | ຫົວໜ່ວຍ | ສາຍພາຍໃນປະເທດ | ສາຍຕ່າງປະເທດ | ເປັນເງິນໂດລາ | ເປັນເງິນກີບ |
|---|---|---|---|---|---|---|
| 1 | ຍົນຂຶ້ນ-ລົງເດີ່ນ<br>*(ປະຕິບັດຜ່ານມາ)* | ຖ້ຽວ | 866<br>*(867)* | 1.165<br>*(1.032)* | | |
| 2 | ຜູ້ໂດຍສານເຂົ້າ-ອອກ<br>*(ປະຕິບັດຜ່ານມາ)* | ຄົນ | 19.543<br>*(23.183)* | 48.495<br>*(56.795)* | | |
| **ລວມການເກັບລາຍຮັບ**<br>*(ປະຕິບັດຜ່ານມາ)* | | | | | 173.630<br>*(206.340)* | 425.996.605<br>*(598.624.765)* |

*(ຈຳນວນຖ້ຽວບິນ, ຜູ້ໂດຍສານ ແລະລາຍຮັບຫລຸດລົງ ຖ້າທຽບໃສ່ເດືອນຜ່ານມາ).*

- **ຂົງເຂດເຄຫາ-ຜັງເມືອງ ແລະສະຖາບັນ ຍທຂ:**
  - ໄດ້ປະສານສົມທົບກັບບໍລິສັດກໍ່ສ້າງຢຸນນານ ສປ ຈີນ ເພື່ອຍາດແຍ່ງທຶນຈາກ ສປ ຈີນ ມາພັດທະນາລະບົບນ້ຳປະປາຢູ່ນະຄອນຫລວງວຽງຈັນ, ປັບປຸງລະບົບໂຄງລ່າງຕົວເມືອງວຽງຄຳ ແລະເມືອງເອກຂອງແຂວງຜົ້ງສາລີ.
  - ສຳເລັດການອອກແບບ ແລະຈັດສັນໜອງສະພັງເລນ, ຮົ້ວອ້ອມກົມມະລຽນພະທາດຫລວງ ແລະວົງວຽນ 450 ປີ ແລະລາຍງານຕໍ່ລັດຖະບານ.
  - ສຳລັບຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຕ່າງໆຂອງວຽກງານເຄຫາ-ຜັງເມືອງ ແມ່ນໄດ້ດຳເນີນໄປດ້ວຍຄວາມຄືບໜ້າຢ່າງປົກກະຕິ ແລະຕໍ່ເນື່ອງ.
- **ຂົງເຂດໂຍທາທິການທາງນ້ຳ:**
  - ໄດ້ຈັດກອງປະຊຸມປຶກສາຫາລື ການກໍ່ສ້າງຕະຝັ່ງເຈື່ອນລຽບຕາມແຄມແມ່ນ້ຳເຫືອງ ຊາຍແດນລະຫວ່າງລາວ-ໄທ.
  - ໄດ້ຈັດກອງປະຊຸມເພື່ອແບ່ງຄວາມຮັບຜິດຊອບລະຫວ່າງກະຊວງ ຍທຂ ແລະກະຊວງພະລັງງານ ແລະບໍ່ແຮ່ ກ່ຽວກັບການຂຸດຄົ້ນຫີນແຮ່ຊາຍຕາມລຳແມ່ນ້ຳຂອງໃນ ສປປ ລາວ, ໂດຍການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.
  - ການຈັດຕັ້ງປະຕິບັດບັນດາໂຄງການປ້ອງກັນຕະຝັ່ງເຈື່ອນຕາມຈຸດຕ່າງໆມາຮອດປະຈຸບັນ ມີດັ່ງນີ້:

| ລ/ດ | ລາຍລະອຽດໂຄງການ | ປະຕິບັດໄດ້ 4/2010 | ປະຕິບັດໄດ້ 5/2010 | ໝາຍເຫດ |
|---|---|---|---|---|
| 1 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນດອກງິ້ວຄຳ (ດອນຊາວ-ບ້ານຄວ້ານ), ລວງຍາວ 7 ກມ | 23,50% | **24,88%** | |
| 2 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນເຂດສະຖາ | 80,00% | **90,00%** | |

| | | | | |
|---|---|---|---|---|
| | ບັນການເມືອງການປົກຄອງແຫ່ງຊາດ,ລວງຍາວ 249 ມ | | | |
| 3 | ໂຄງການພັດທະນາແຄມຂອງແຕ່ເກົ້າລ້ຽວ-ຫລັກ 3 | 23,39% | **20,00%** | |
| 4 | ໂຄງການສ້ອມແປງສູນເດີນເຮືອ ກມ 19 | 70,00% | **98,00%** | |
| 5 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ເຂດເມືອງໜອງບົກ, ຂ.ຄໍາມ່ວນ<br>- ເຂດບ້ານດອນຊຽວ<br>- ເຂດບ້ານຊຽງຫວາງ, | <br>64,00%<br>85,00% | <br>**72,00%**<br>**93,70%** | |
| 6 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນເຂດບ້ານຫົວໂຂງພະໃຫຍ່, ຂ.ຈໍາປາສັກ | 51,00% | **75,00%** | |

- **ຂົງເຂດທາງລົດໄຟ:**
  - ໄດ້ປະຕິບັດການແລ່ນລົດໄຟລະຫວ່າງທ່ານາແລ້ງ-ໜອງຄາຍ (ໄທ) ຢ່າງເປັນປົກກະຕິ, ສະຫລຸບຈຳນວນຜູ້ໂດຍສານທີ່ໃຊ້ບໍລິການລົດໄຟລາວ-ໄທ ແຕ່ວັນທີ 1-31/1/2010 ທັງໝົດ **2.183** ຄົນ (ຂາເຂົ້າ: **1.083** ຄົນ ແລະຂາອອກ: **1.100** ຄົນ, ຫລຸດລົງຈາກເດືອນຜ່ານມາທີ່ມີຈຳນວນ **3.899** ຄົນ).
  - ໂຄງການການອອກແບບລະອຽດທາງລົດໄຟໄລຍະ II ແຕ່ທ່ານາແລ້ງ ຫາສະຖານີວຽງຈັນ, ລວງຍາວ 9 ກິໂລແມັດ, ປະຕິບັດໄດ້ **75%** (ຈາກ 70% ໃນເດືອນຜ່ານມາ).
  - ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບບໍລິສັດ Seoul Metro ຂອງ ສ.ເກົາຫລີ ກ່ຽວກັບໂຄງການກໍ່ສ້າງທາງລົດໄຟແຕ່ນະຄອນຫລວງວຽງຈັນ (ຫລັກ 31) ຫາທົ່ງມັ່ງ.

## II. <u>ແຜນວຽກຈຸດສຸມໃນເດືອນ 6/2010.</u>

- ສູ້ຊົນປະຕິບັດໜ້າວຽກຕ່າງໆທີ່ໄດ້ກຳນົດໄວ້ໃນແຜນການສົກປີ 2009-2010 ຂອງຂະແໜງ ຍທຂ ໃຫ້ສຳເລັດຕາມຄາດໝາຍທີ່ໄດ້ວາງໄວ້. ນັບທັງການຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງໃຫ້ສຳເລັດຕາມແຜນການທີ່ກຳນົດໄວ້.
- ຕ້ອນຮັບ ແລະເຮັດວຽກກັບຄະນະຜູ້ແທນຂັ້ນສູງຈາກກະຊວງຄົມມະນາຄົມ ແລະຂົນສົ່ງແຫ່ງ ສປ ຈີນ, ລະຫວ່າງວັນທີ 20-23/5/2010 (ອຳນວຍຄວາມສະດວກການຂົນສົ່ງຜ່ານແດນລາວ-ຈີນ-ໄທ ແລະການເປີດບ່ານຟ້າລາວ-ຈີນ).

- **ຂົງເຂດຂົວທາງ:**
  - ສືບຕໍ່ຕິດຕາມ ແລະຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ໃຫ້ສຳເລັດຕາມແຜນການທີ່ໄດ້ກຳນົດໄວ້.
  - ສືບຕໍ່ປະສານ ແລະຊຸກຍູ້ຜູ້ໃຫ້ທຶນ ເພື່ອກະກຽມເງື່ອນໄຂຮອບດ້ານໃຫ້ແກ່ການປະຕິບັດບັນດາບົດບັນທຶກຄວາມເຂົ້າໃຈທີ່ໄດ້ເຊັນຮ່ວມກັນ.
- **ຂົງເຂດເຄຫາ-ຜັງເມືອງ:**
  - ກະກຽມການມອບ-ຮັບໂຄງການນ້ຳປະປາໃນກຸ່ມຕົວເມືອງທີ 1 ຂອງໂຄງການນ້ຳປະປາພາກເໜືອ-ພາກກາງຄື: ເມືອງຮຸນ, ເມືອງແກ່ນທ້າວ ແລະເມືອງນານ.
- **ຂົງເຂດໂຍທາທິການທາງນ້ຳ:**

III. <u>ພາກສະເໜີ:</u>

- ສະເໜີກະຊວງພະລັງງານ-ບໍ່ແຮ່ ແລະອົງການຊັບພະຍາກອນນໍ້າ ແລະສິ່ງແວດລ້ອມ ເອົາໃຈໃສ່ກວດກາຄືນການສໍາປະທານຂຸດຄົ້ນແຮ່ຄໍາຂອງບໍລິສັດພູເບ້ຍມາຍນິງ ແລະການຂຸດຄົ້ນຂອງຜູ້ລົງທຶນລາຍອື່ນໆຢູ່ເມືອງໂພນສະຫວັນ ແຂວງຊຽງຂວາງ, ເນື່ອງຈາກມີຜົນກະທົບເຖິງສິ່ງແວດລ້ອມດ້ານແຫລ່ງນໍ້າໃຊ້, ນໍ້າກິນ, ແຫລ່ງນໍ້າເພື່ອຜະລິດນໍ້າປະປາຂອງຕົວເມືອງໂພນສະຫວັນ.
- ສະເໜີຕໍ່ນະຄອນຫລວງວຽງຈັນ ແລະອົງການທີ່ດິນແຫ່ງຊາດ ກ່ຽວກັບການເກັບຄ່າທໍານຽມເຊັນເອກະສານຊື້ຂາຍຕ່າງໆຢູ່ແຕ່ລະບ້ານບໍ່ຄືກັນ, ໂດຍສະເພາະຄ່າທໍານຽມໂອນກໍາມະສິດທີ່ດິນທີ່ບໍ່ມີໃບບິນ, ບໍ່ໂປ່ງໃສ (ມີບາງບ້ານເກັບຮອດ 300.000 ກີບ/ໄລ່).

ດັ່ງນັ້ນ ຈຶ່ງສະເໜີຍັງທ່ານເພື່ອຊາບຕາມທາງຄວນດ້ວຍ.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ